**ບົດອອກຂ່າວ**

ກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ VIII ໄຂຂຶ້ນຢ່າງເປັນທາງການໃນວັນທີ 18 ຕຸລາ 2012 ທີ່ຫ້ອງວ່າການແຂວງເຊກອງ, ໂດຍການເປັນປະທານຮ່ວມຂອງທ່ານນາງ ເຂັມມະນີ ພົນເສນາ ລັດຖະມົນຕີຊ່ວຍວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ແລະທ່ານ ຫງວຽນ ເກີມຕູ້ ລັດຖະມົນຕີຊ່ວຍວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສສຫວຽດນາມ, ເປັນກຽດເຂົ້າຮ່ວມພິທີ ແລະ ກ່າວຕ້ອນຮັບໂດຍ ທ່ານ ຄຳເຜີຍ ບຸດດາວຽງ ກຳມະການສູນກາງພັກ ເລຂາພັກແຂວງ, ເຈົ້າແຂວງໆເຊກອງ ພ້ອມດ້ວຍຄະນະຜູ້ແທນທັງພາກລັດ ແລະ ທຸລະກິດທັງສູນກາງ ແລະ ທ້ອງຖິ່ນຂອງແຂວງທີ່ມີຊາຍແດນຕິດຈອດກັນຂອງສອງປະເທດ ລາວ-ຫວຽດນາມ ຫຼາຍກວ່າ 120 ທ່ານ.

ກອງປະຊຸມໃນຄັ້ງນີ້ ໄຂຂຶ້ນພາຍໃຕ້ບັນຍາກາດທີ່ທົ່ວພັກທົ່ວປວງຊົນຂອງສອງຊາດກຳລັງສະເຫຼີມສະຫຼອງສອງເຫດການສຳຄັນທາງດ້ານປະຫວັດສາດຂອງສອງປະເທດຄື: ວັນສ້າງຕັ້ງສາຍພົວພັນການທູດຄົບຮອບ 50 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລາວ-ຫວຽດນາມ ຄົບຮອບ 35 ປີ, ຂະແໜງອຸດສາຫະກຳ ແລະ ການຄ້າເຫັນໄດ້ຄວາມໝາຍ ແລະ ຄວາມສຳຄັນຕໍ່ສອງວັນປະຫວັດສາດດັ່ງກ່າວ ຊຶ່ງກອງປະຊຸມໃນຄັ້ງນີ້ກໍແມ່ນໜຶ່ງໃນກິດຈະກຳທີ່ສະເຫຼີມສະຫຼອງວັນດັ່ງກ່າວ.

ຈຸດປະສົງຂອງການຈັດກອງປະຊຸມໃນຄັ້ງນີ້ ແມ່ນເພື່ອສັງເກດຕີລາຄາສະພາບ ການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກກອງປະຊຸມຄັ້ງທີ VII ທີ່ຜ່ານມາ ຊຶ່ງສອງຝ່າຍໄດ້ເປັນເອກະພາບຜັດປ່ຽນກັນຈັດ 02 ປີຕໍ່ຄັ້ງ, ເພື່ອແລກປ່ຽນຄຳຄິດຄຳເຫັນ ແລະ ຊອກຫາວິທີທາງກົນໄກແກ້ໄຂສິ່ງກີດຂວາງຕໍ່ການຮ່ວມມືພັດ ທະນາການຄ້າຊາຍແດນ ລາວ-ຫວຽດນາມ ໃນຕໍ່ໜ້າເພື່ອແນໃສ່ຊຸກຍູ້ການຈັດຕັ້ງປະຕິບັດໂຄງການພັດທະ ນາການຄ້າລາວ-ຫວຽດນາມ ໄລຍະ 2008-2015, ໃຫ້ບັນລຸ 01 ຕື້ໂດລາ ໃນປີ 2012 ແລະ 02 ຕື້ໂດລາ ໃນປີ 2015 ໃຫ້ປະກົດຜົນເປັນຈິງ ຊຶ່ງຜ່ານຈາກການຈັດຕັ້ງປະຕິບັດໃນໄລຍະທີ່ຜ່ານມາເຫັນໄດ້ວ່າມູນຄ່າການຄ້າລາວ-ຫວຽດນາມ ໃນປີ 2011 ທຽບໃສ່ປີ 2010 ເພີ່ມຂຶ້ນ 49%, ໃນນັ້ນການສົ່ງອອກ ເພີ່ມຂຶ້ນ 57% ແລະ ການນຳເຂົ້າເພີ່ມຂຶ້ນ 38%.

ກອງປະຊຸມໃນຄັ້ງນີ້ ໄດ້ປຶກສາຫາລືບັນຫາທີ່ພົ້ນເດັ່ນເຊັ່ນ: ການຈັດຕັ້ງປະຕິບັດໂຄງການແຜນແມ່ບົດພັດ ທະນາຕາໜ່າງຕະຫຼາດຊາຍແດນລາວ-ຫວຽດນາມ ຮອດປີ 2020 ທີ່ສອງຝ່າຍໄດ້ຮັບຮອງເອົາ, ໂຄງ ການຍົກລະດັບຕະຫຼາດຫ້ວຍດິນດຳ ໃຫ້ສາມາດເລີ່ມຕົ້ນດຳເນີນໂຄງການໃນປີ 2013, ການສ້າງ

ລະບຽບການຄຸ້ມຄອງຕະຫຼາດຊາຍແດນຮ່ວມ ລະຫວ່າງລາວ-ຫວຽດນາມ ໂດຍທົດລອງນຳໃຊ້ຢູ່ບາງຈຸດຕະຫຼາດຕາມຊາຍແດນ, ການຈັດຕັ້ງປະຕິບັດຂໍ້ຕົກລົງຮ່າໂນ້ຍ ປີ 2007 ກ່ຽວກັບການຮ່ວມມືກັນລົງຕິດຕາມກວດກາການຈັດຕັ້ງປະຕິບັດ ການຄຸ້ມຄອງຕະຫຼາດຊາຍແດນ ແລະ ການຄ້າຊາຍແດນ. ການຈັດຕັ້ງປະຕິບັດສັນຍາການຫຼຸດຜ່ອນອັດຕາພາສີ 50% ແລະ 0% ທີ່ ສປປ ລາວ ແລະ ສສ ຫວຽດນາມໄດ້ປະຕິບັດນຳກັນ ເພື່ອໃຫ້ສອດຄ່ອງກັບການຕົກລົງຂອງສອງຝ່າຍ ແລະ ການແລກປ່ຽນຂໍ້ມູນຂ່າວສານ, ບົດຮຽນໃນການຄຸ້ມຄອງການຄ້າຊາຍແດນ ກັບບັນດາຂະແໜງການທີ່ກ່ຽວຂ້ອງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ໂຄສະນາ ແລະ ເຜີຍແຜ່ກົນໄກ, ນະໂຍບາຍການຄ້າຊາຍແດນໃຫ້ແກ່ປະຊາຊົນຢູ່ຂົງເຂດຊາຍແດນ ແລະ ພາກທຸລະກິດຂອງສອງປະເທດ, ນອກນັ້ນຍັງໄດ້ປຶກສາຫາລືກ່ຽວກັບການເພີ່ມທະວີວຽກງານການຄຸ້ມຄອງ ຕະຫຼາດຊາຍແດນ ແນໃສ່ຫຼຸດຜ່ອນການຄ້າຂາຍນອກລະບົບ. ສິ່ງທີ່ພົ້ນເດັ່ນສອງຝ່າຍ ໄດ້ຊອກຫາຊ່ອງທາງໃນການດຶງດູດນັກລົງທຶນ ເພື່ອພັດທະນາເຂດການຄ້າຊາຍແດນຂອງສອງປະເທດທີ່ໄດ້ກຳນົດໄວ້ຢູ່ແຜນແມ່ບົດດັ່ງກ່າວໃຫ້ບັນລຸຕາມແຜນທີ່ກຳນົດໄວ້ເພື່ອແນໃສ່ຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນທີ່ອາໄສຢູ່ເຂດຫ່າງໄກສອກຫຼີກ ຕາມແນວທາງຂອງພັກສະໄໝທີ IX ໃຫ້ປະກົດຜົນເປັນຈິງ.